# ການປຽບທຽບລະຫວ່າງ

## ນະໂຍບາຍການປົກປ້ອງ ແລະ ການປ້ອງກັນເດັກນ້ອຍ ຂອງອົງການແຄຣ໌ສາກົນ ແລະ ອົງການແຄຣ໌ອົດສະຕາລີ

Supporting women.
Defeating poverty.

# ການປຽບທຽບລະຫວ່າງ ນະໂຍບາຍການປົກປ້ອງ ແລະ ການປ້ອງກັນເດັກນ້ອຍຂອງອົງການແຄຣ໌ສາກົນ ແລະ ອົງການແຄຣ໌ອົດສະຕາລີ

ທັງສອງນະໂຍບາຍຢືນຢັນ ແລະ ຊີ້ທິດທາງຄວາມພະຍາຍາມຂອງອົງການແຄຣ໌ ເພື່ອປົກປ້ອງປະຊາຊົນຈາກການລວນລາມທາງເພດ, ການຫາຜົນປະໂຫຍດທາງເພດ ແລະ ການລ່ວງລະເມີດທາງເພດ, ແລະການລ່ວງລະເມີດເດັກ:

- ນະໂຍບາຍການປົກປ້ອງ ຂອງອົງການແຄຣ໌ ສາກົນ: ການປ້ອງກັນຈາກການລວນລາມທາງເພດ, ການຫາຜົນປະໂຫຍດທາງເພດ ແລະການລ່ວງລະເມີດທາງເພດ, ແລະການລ່ວງລະເມີດເດັກ (ນະໂຍບາຍການປົກປ້ອງ CI).
- ນະໂຍບາຍການປ້ອງກັນເດັກຂອງອົງການແຄຣ໌ອົດສະຕາລີ (ນະໂຍບາຍການປ້ອງກັນເດັກ CA)

ນະໂຍບາຍການປ້ອງກັນເດັກຂອງອົງການແຄຣ໌ອົດສະຕາລີ ແມ່ນສອດຄ່ອງ ແລະ ເສີມຂະຫຍາຍນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ, ແລະ ເພີ່ມເຕີມບາງຂໍ້ກໍານົດໃນນະໂຍບາຍປ້ອງກັນເດັກຂອງແຄຣ໌ອົດສະຕາລີ, ຫ້ອງການປະຈໍາປະເທດທີ່ຂຶ້ນກັບອົງການແຄຣ໌ອົດສະຕາລີ, ບຸກຄະລາກອນໃນປະເທດຂອງອົງການແຄຣ໌ສາກົນ ຜູ້ທີ່ມີສ່ວນຮ່ວມໂດຍກົງໃນການຈັດຕັ້ງແຜນງານ ຫຼືໂຄງການ ທີ່ຄຸ້ມຄອງ ຫຼື ໄດ້ຮັບທຶນທັງຫມົດ ຫຼື ບາງສ່ວນ ໂດຍແຄຣ໌ອົດສະຕາລີ, ລວມທັງຄູ່ຮ່ວມງານ ແລະ ແຂກມາຢ້ຽມຢາມ.
ເອກະສານສະບັບນີ້ ຈະເນັ້ນໃສ່ ບັນຫາຄວາມຄ້າຍຄືກັນ ແລະ ຄວາມແຕກຕ່າງລະຫວ່າງສອງນະໂຍບາຍດັ່ງກ່າວ.

## ສະຫຼຸບໂດຍຫຍໍ້

ນະໂຍບາຍປົກປ້ອງຂອງແຄຣ໌ສາກົນ ໄດ້ລະບຸຄໍາຫມັ້ນສັນຍາລະດັບສູງສຸດ ແລະ ຄວາມຄາດຫວັງສໍາລັບພະນັກງານ, ອາສາສະໝັກ, ແຂກມາຢ້ຽມຢາມ, ບຸກຄົນ ແລະ ຄູ່ຮ່ວມງານ ແລະ ບຸກຄະລາກອນທີ່ກ່ຽວຂ້ອງ.
ນະໂຍບາຍການປ້ອງເດັກນ້ອຍຂອງແຄຣ໌ອົດສະຕາລີ ໃຫ້ລາຍລະອຽດ ແລະ ຂໍ້ກໍານົດເພີ່ມເຕີມ, ໂດຍສະເພາະແມ່ນກ່ຽວກັບ:

- ຜົນປະໂຫຍດທີ່ດີທີ່ສຸດຂອງເດັກນ້ອຍຈະເປັນບຸລະມະສິດອັນຕົ້ນຕໍ ໃນການພິຈາລະນາທຸກການກະທໍາທັງຫມົດທີ່ກ່ຽວພັນກັບເດັກນ້ອຍ;
- ກໍານົດຂະບວນການກວດກາສໍາລັບບຸກຄະລາກອນຂອງອົງການແຄຣ໌ ແລະ ພະນັກງານຂອງຄູ່ຮ່ວມງານໃນຂອບເຂດ:
    - ຂະບວນການຮັບສະໝັກພະນັກງານ
    - ການກວດສອບຄະດີອາຍາ
- ກໍານົດຄວາມຕ້ອງການ ການຝຶກອົບຮົມໃຫ້ຄູ່ຮ່ວມງານກ່ຽວກັບການປ້ອງກັນເດັກ ແລະ ການແນະນໍາກົນໄກການລາຍງານໃນເວລາການເຮັດປະຖົມນິເທດ ຫຼື ການແນະນໍາໂຄງການ ແລະ ການຝຶກອົບຮົມກ່ຽວກັບນະໂຍບາຍດັ່ງກ່າວຢ່າງເປັນປົກກະຕິ (ຢ່າງຕໍ່າສຸດທຸກໆ 2 ປີ).
- ກໍານົດຢ່າງຈະແຈ້ງວ່າ ໃນທຸກສັນຍາທີ່ມີກັບອົງການ ຖ້າບໍ່ປະຕິບັດຕາມນະໂຍບາຍຈະເປັນພື້ນຖານໃນການຍົກເລີກສັນຍາ.
- ຄວາມຮັບຜິດຊອບຮ່ວມກັນລະຫວ່າງອົງການແຄຣ໌ ແລະ ຄູ່ຮ່ວມງານ ທີ່ມີກົນໄກການລາຍງານທີ່ຊັດເຈນ:
    - ກົນໄກການຕໍານິຕິຊົມໃນລະດັບຊຸມຊົນທີ່ເໝາະສົມກັບສະພາບການທ້ອງຖິ່ນ ແລະ ສາມາດເຂົ້າເຖິງຜູ້ເຂົ້າຮ່ວມໂຄງການທັງຫມົດ (ໂດຍສະເພາະແມ່ນເດັກນ້ອຍ).

Supporting women.
Defeating poverty.

## ການປຽບທຽບລະຫວ່າງ ນະໂຍບາຍການປົກປ້ອງ ແລະ ການປ້ອງກັນເດັກນ້ອຍຂອງອົງການແຄຣ໌ສາກົນ ແລະ ອົງການແຄຣ໌ອົດສະຕາລີ

○ ກົນໄກການລາຍງານ ຫຼື ຂັ້ນຕອນສໍາລັບບຸກຄະລາກອນໃນການລາຍງານການກ່າວຫາ, ຄວາມເຊື່ອ, ການສົງໄສ ຫຼື ເປີດເຜີຍການຂູດຮີດ ຫຼື ການລ່ວງລະເມີດເດັກ.

- ກໍານົດຂັ້ນຕອນການລາຍງານ ແລະ ສືບສວນ, ພາລະບົດບາດ ແລະ ຄວາມຮັບຜິດຊອບ.

ນອກຈາກນັ້ນ, ຫຼັກຈັນຍາບັນຂອງການປົກປ້ອງເດັກໄດ້ລະບຸວ່າທຸກຄົນຢູ່ໃນຂອບເຂດຂອງ ນະໂຍບາຍການປົກປ້ອງເດັກຂອງອົງການແຄຣ໌ ອົດສະຕາລີ ດັ່ງລຸ່ມນີ້:

- ຕ້ອງເປີດເຜີຍຂໍ້ກ່າວຫາ ແລະ ການດໍາເນີນຄະດີຂອງສານ ພ້ອມທັງການຕັດສິນໂທດ ແລະ ຜົນຮັບອື່ນໆຂອງການກະທໍາຜິດທີ່ເຄີຍມີ
- ບໍ່ເອົາເດັກນ້ອຍຜູ້ທີ່ບໍ່ມີການເບິ່ງແຍງຈາກຜູ່ໃຫຍ່ມາເຮືອນສ່ວນຕົວຂອງຕົນ, ເວັ້ນເສຍແຕ່ວ່າເດັກນ້ອຍຜູ້ນັ້ນຢູ່ໃນຄວາມສ່ຽງ ຕໍ່ການທີ່ຈະຖືກບາດເຈັບ ຫຼື ອັນຕະລາຍທາງດ້ານຮ່າງກາຍ ຢ່າງກະທັນຫັນ.
- ບໍ່ນອນຢູ່ໃກ້ກັບເດັກນ້ອຍທີ່ບໍ່ມີການເບິ່ງແຍງຈາກຜູ້ໃຫຍ່ ເວັ້ນເສຍແຕ່ວ່າມີຄວາມຈໍາເປັນຢ່າງແທ້ຈິງ, ໃນທຸກກໍລະນີຕ້ອງໄດ້ຮັບການອະນຸຍາດຈາກຫົວໜ້າສາຍງານຂອງຕົນ, ແລະຮັບປະກັນວ່າມີຜູ້ໃຫຍ່ຄົນອື່ນຖ້າເປັນໄປໄດ້ (ໝາຍເຫດ: ກົດລະບຽບນີ້ຈະບໍ່ນໍາໃຊ້ກັບລູກຂອງຕົນເອງ).
- ບໍ່ຢູ່ພາຍໃຕ້ອິດທິພົນຂອງເຫຼົ້າ ຫຼື ຢາເສບຕິດໃນຂະນະທີ່ພົວພັນກັບເດັກທີ່ບໍ່ມີການເບິ່ງແຍງຈາກຜູ້ໃຫຍ່ (ໝາຍເຫດ: ກົດລະບຽບນີ້ຈະບໍ່ນໍາໃຊ້ກັບລູກຂອງຕົນເອງ).
- ບໍ່ເອົາເດັກນ້ອຍໄປໃຊ້ແຮງງານເດັກ

### ການວິເຄາະລາຍລະອຽດ

ພາກຕໍ່ໄປນີ້ຈະປຽບທຽບ ແລະ ສິ່ງທີ່ແຕກຕ່າງຂອງສອງນະໂຍບາຍ ແລະ ກົດລະບຽບການທີ່ມີຢູ່ໃນເອກະສານຊ້ອນທ້າຍຂອງແຕ່ລະນະໂຍບາຍ. ຄໍາຫຍໍ້ ແລະ ຄໍານິຍາມຕໍ່ໄປນີ້ແມ່ນໃຊ້ໃນຕາຕະລາງຂ້າງລຸ່ມ:

- SHEA (Sexual Harassment, Exploitation and Abuse) = ການລວນລາມທາງເພດ, ການຫາຜົນປະໂຫຍດ ແລະ ການລ່ວງລະເມີດທາງເພດ
- CI (CARE International)= ອົງການແຄຣ໌ສາກົນ
- CA (CARE Australia) = ອົງການແຄຣ໌ອົດສະຕາລີ
- ບຸກຄະລາກອນ = ພະນັກງານ ແລະ ອາສາສະໝັກ ລວມທັງນັກຮຽນຝຶກງານ, ຄະນະທີ່ປຶກສາຂອງອົງການ

| ລາຍການ | ນະໂຍບາຍການປົກປ້ອງຂອງແຄຣ໌ສາກົນ | ນະໂຍບາຍການປ້ອງກັນເດັກຂອງແຄຣ໌ອົດສະຕາລີ |
|---|---|---|
| ຖະແຫຼງການຂອງນະໂຍບາຍ | • ການລວນລາມທາງເພດ, ການຫາຜົນປະໂຫຍດທາງເພດ ແລະ ການລ່ວງລະເມີດທາງເພດ ແລະການລ່ວງລະເມີດເດັກ ແມ່ນຍອມຮັບບໍ່ໄດ້.<br>• ຮັບຮູ້ວ່າແມ່ຍິງ, ຜູ້ດ້ອຍໂອກາດທີ່ເປັນຜູ້ໃຫຍ່ ແລະ ເດັກນ້ອຍ ແມ່ນມີຄວາມສ່ຽງຫລາຍກ່ວາໃນເລື່ອງຂອງການລວນລາມທາງເພດ, ການຫາ | ໄດ້ເນັ້ນຫນັກໃສ່ເພີ່ມເຕີມດັ່ງລຸ່ມນີ້:<br>• ຄວາມຮັບຜິດຊອບຂອງທຸກຄົນໃນການດູແລ ແລະປົກປ້ອງເດັກນ້ອຍ ແລະ ລາຍງານເຫດການ. |

| | | |
|---|---|---|
| | ຜົນປະໂຫຍດ ແລະ ການລ່ວງລະເມີດທາງເພດ ແລະ ການລ່ວງລະເມີດເດັກ.<br>• ມີຄວາມຮັບຜິດຊອບໃນການປົກປ້ອງຜູ້ທີ່ພວກເຮົາເຮັດວຽກນຳ ແລະກັບຜູ້ທີ່ເຮັດວຽກສຳລັບພວກເຮົາ<br>• ວິທີການເອົາຜູ້ໄດ້ຮັບຜົນກະທົບເປັນຈຸດໃຈກາງ: ຄວາມຕ້ອງການ ແລະ ຄວາມປາດຖະໜາຂອງຜູ້ໄດ້ຮັບຜົນກະທົບເປັນຫລັກສຳຄັນໃນການຕອບໂຕ້ຕໍ່ບັນຫາ, ຜູ້ໄດ້ຮັບຜົນກະທົບຈະໄດ້ຮັບການປະຕິບັດຢ່າງມີກຽດສັກສີ ແລະ ດ້ວຍຄວາມເຄົາລົບ ນັບຖືສິດທິຂອງຜູ້ໄດ້ຮັບຜົນກະທົບ,ນັບຖືສິດທິສ່ວນຕົວຂອງເຂົາເຈົ້າ ແລະ ໃຫ້ການສະໜັບສະໜູນເຂົາເຈົ້າແມ່ນເປັນບຸລິມະສິດສຳຄັນ.<br>• ບົດລາຍງານທັງໝົດຈະຖືກປະຕິບັດຢ່າງຈິງຈັງ ແລະຈະມີການກວດກາ / ສືບສວນ. | • ຜົນປະໂຫຍດທີ່ດີທີ່ສຸດຂອງເດັກນ້ອຍຈະເປັນບຸລະມະສິດອັນຕົ້ນຕໍໃນການພິຈາລະນາທຸກການກະທຳທັງຫມົດທີ່ກ່ຽວພັນກັບເດັກນ້ອຍ. |
| ນິຍາມຄຳວ່າ ເດັກນ້ອຍ | ທຸກໆຄົນຜູ້ທີ່ມີອາຍຸຕ່ຳກ່ວາ 18 ປີ | ທຸກໆຄົນຜູ້ທີ່ມີອາຍຸຕ່ຳກ່ວາ 18 ປີ |
| ຂອບເຂດຂອງ ນະໂຍບາຍ | **ອົງການແຄຣ໌:**<br>● ພະນັກງານອົງການແຄຣ໌ທັງໝົດເຊັ່ນ: ບຸກຄະລາກອນ ຂອງອົງການແຄຣ໌ສາກົນ ໃນລະດັບນິຕິບຸກຄົນ, ທີ່ເປັນສະມາຊິກ, ສາຂາ ຫຼື ຫ້ອງການປະຈຳປະເທດ.<br>**ຄູ່ຮ່ວມງານ:**<br>● ບຸກຄົນ ແລະ ບໍລິສັດຜູ້ຮັບເໝົາ ແລະ ບຸກຄະລາກອນທີ່ກ່ຽວຂ້ອງຂອງເຂົາເຈົ້າ, ໃນນີ້ລວມທັງນິດຕິບຸກຄົນທັງຫມົດ (ແລະ ບຸກຄະລາກອນຂອງເຂົາເຈົ້າ) ແລະ ບຸກຄົນຜູ້ທີ່ມີສັນຍາຂໍ້ຕົກລົງກັບອົງການແຄຣ໌ໃນການເປັນຄູ່ຮ່ວມງານ, ການໃຫ້ການບໍລິການຍ່ອຍ ຫຼື ເຊັ່ນດຽວກັນກັບອາສາສະຫມັກລະດັບຊຸມຊົນ ແລະ ພະນັກງານອາສາສະຫມັກລະດັບຊຸມຊົນ.<br>**ແຂກມາຢ້ຽມຢາມ:**<br>● ແຂກມາຢ້ຽມຢາມທັງໝົດ | **ອົງການແຄຣ໌:**<br>• ບຸກຄະລາກອນທັງໝົດໃນອົງການແຄຣ໌ອົດສະຕາລີ.<br>• ບຸກຄະລາກອນທັງຫມົດໃນອົງການແຄຣ໌ປະຈຳປະເທດທີ່ຄຸ້ມຄອງໂດຍແຄຣ໌ອົດສະຕາລີ.<br>• ບຸກຄະລາກອນໃນອົງການແຄຣ໌ສາກົນທີ່ບໍ່ຂຶ້ນກັບການຄຸ້ມຄອງຂອງແຄຣ໌ອົດສະຕາລີ ຜູ້ທີ່ຈັດຕັ້ງປະຕິບັດໂຄງການໂດຍກົງ ຊຶ່ງບໍລິຫານ ຫລື ໃຫ້ທຶນທັງໝົດ ຫລື ສ່ວນໃດນຶ່ງຈາກແຄຣ໌ອົດສະຕາລີ.<br>**ຄູ່ຮ່ວມງານ:**<br>● ຜູ້ໃຫ້ບໍລິການພາຍນອກທີ່ມີສ່ວນຮ່ວມໂດຍແຄຣ໌ ອົດສະຕາລີ ຫຼື ໂດຍອົງການແຄຣ໌ ປະຈຳປະເທດໃນນາມຂອງແຄຣ໌ອົດສະຕາລີ, ຜູ້ທີ່ມີໜ້າທີ່ ທີ່ອາດຈະມີການຕິດຕໍ່ພົວພັນກັບເດັກນ້ອຍ, ຊຶ່ງປະກອບມີຜູ້ຮັບເຫມົາ, ທີ່ປຶກສາ ຜູ້ຂາຍ ແລະ ຄູ່ຮ່ວມງານອື່ນໆ. ລວມທັງຄູ່ຮ່ວມງານ ຫຼື ອົງການທີ່ໄດ້ຮັບທຶນ ຫຼື ເປັນຄູ່ສັນຍາຍ່ອຍໂດຍແຄຣ໌ອົດສະຕາລີ ຫຼື ຄູ່ຮ່ວມງານແຄຣ໌ ແລະ ບຸກຄະລາກອນຂອງເຂົາເຈົ້າ ທີ່ອາດຈະມີການຕິດຕໍ່ກັບເດັກນ້ອຍ.<br>**ແຂກມາຢ້ຽມຢາມ**<br>ແຂກມາຢ້ຽມຢາມທັງໝົດ (ແຕ່ມີພັນທະນຳໃຊ້ໃນເຂດທີ່ລະບຸໄວ້ເທົ່ານັ້ນ). |

| | | |
|---|---|---|
| ວັດທະນະທຳ, ຄວາມເປັນຜູ້ນຳ | • ອົງການແຄຣ໌ ຈະພະຍາຍາມທຸກຂັ້ນຕອນເພື່ອ ສົ່ງເສີມ, ສ້າງ ແລະ ຮັກສາວັດທະນະທຳອົງການ ທີ່ມີປອດໄພ ສຳລັບທຸກຄົນທີ່ເຮັດວຽກສຳລັບ ແລະ ກັບອົງການແຄຣ໌, ລວມທັງຄູ່ຮ່ວມງານ ແລະ ຊຸມຊົນທີ່ແຄຣ໌ເຮັດວຽກນຳ.<br>• ອົງການແຄຣ໌ ຈະສ້າງຍຸດທະສາດໃນວຽກງານ ການປົກປ້ອງສະເພາະຂອງອົງການ. | • ຕາມນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ. |
| ຂະບວນການ ການກວດກາ | • ແຄຣ໌ຈະປ້ອງກັນບໍ່ໃຫ້ຜູ້ກະທຳຜິດກ່ຽວກັບ ການລວນລາມທາງເພດ, ການຫາຜົນປະໂຫຍດ ແລະ ລ່ວງລະເມີດທາງເພດ ແລະລ່ວງລະເມີດເດັກນ້ອຍ ຖືກວ່າຈ້າງ ຫຼື ຈ້າງໃໝ່ ໂດຍຜ່ານຂະບວນການ ການ ກວດກາຢ່າງເຂັ່ງຄັດ. | ໃຫ້ລາຍລະອຽດຂອງຂະບວນການກວດກາເຫຼົ່ານັ້ນ (ພາກ ທີ 4.5):<br>● ຂໍ້ແນະນຳການຈ້າງງານທີ່ເຂັ້ມງວດສຳລັບການຮັບ ສະຫມັກທຸກຕຳແໜ່ງງານບຸກຄະລາກອນໃນຂອບເຂດ ຂອງນະໂຍບາຍຊຶ່ງລວມທັງດັ່ງລຸ່ມນີ້:<br><br>○ ມີປະໂຫຍກການຢືນຢັນຄຳຫມັ້ນສັນຍາກ່ຽວກັບການ ປ້ອງກັນເດັກ ໃນທຸກການປະກາດຮັບພະນັກງານ ແລະ ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະຕຳແໜ່ງ.<br>○ ຜູ້ຮັບສະໝັກສາມາດເຂົ້າເຖິງນະໂຍບາຍການປ້ອງກັນ ເດັກ.<br>○ ທຸກການສຳພາດ ແມ່ນມີຄຳຖາມກ່ຽວກັບການປ້ອງກັນ ເດັກ.<br>○ ບັນທຶກການກວດສອບຂໍ້ມູນອ້າງອີງທາງວາຈາເປັນເອ ກະສານ ສຳລັບທຸກຕຳແຫນ່ງທີ່ອາດຈະມີການ ຕິດຕໍ່ພົວພັນກັບເດັກນ້ອຍ.<br>○ ຜູ້ສະໝັກທຸກຄົນຕ້ອງມີການເປີດເຜີຍ ວ່າເຂົາເຈົ້າເຄີຍຖືກກ່າວຫາກ່ຽວກັບການລະເມີດ ແລະຫາ ຜົນປະໂຫຍດກັບເດັກນ້ອຍ<br>• ຂໍ້ກຳນົດໃນການດຳເນີນການກວດກາໂທດ ທາງອາຍາຂອງພະນັກງານແຄຣ໌ ທັງໝົດໃນຂອບເຂດຂອງ ນະໂຍບາຍໂດຍບໍ່ຄຳນຶງເຖິງວ່າພວກເຂົາເຮັດວຽກກັບ ເດັກນ້ອຍ ແລະ ສຳລັບຄູ່ຮ່ວມງານຜູ້ທີ່ອາດຈະມີການ ຕິດຕໍ່ພົວພັນກັບເດັກນ້ອຍ<br>○ ການກວດກາຕ້ອງດຳເນີນໃນແຕ່ລະປະເທດທີ່ບຸກຄົນ ອາໄສຢູ່ຢ່າງໜ້ອຍເປັນເວລາ 12 ເດືອນ ຫຼືຫຼາຍກວ່ານັ້ນ ໃນ 5 ປີຜ່ານມາ ແລະ ສຳລັບບຸກຄົນທີ່ຖືສັນຊາດຂອງ ປະເທດນັ້ນໆ. |

| | | |
|---|---|---|
| | | ○ ບ່ອນທີ່ບໍ່ເປັນໄປໄດ້ໃນການກວດສອບຄະດີອາຍາ ຫຼື ໃບແຈ້ງໂທດ ຫຼື ເຮັດໃຫ້ເກີດຄວາມສ່ຽງຕໍ່ຜູ້ສະໝັກ, ຕື່ມຂໍ້ມູນໃສ່ໃນໃບຢັ້ງຢືນ ທີ່ທຽບເທົ່າໃບແຈ້ງໂທດ ແລະດຳເນີນການກວດກາຢ່າງເຄັ່ງຄັດ.<br>○ ການກວດສອບຍັງຈະດຳເນີນການສຳລັບ ພະນັກງານອົງການແຄຣ໌ ຫຼື ຄູ່ຮ່ວມງານ ຊຶ່ງໃນຂອບເຂດຂອງນະໂຍບາຍຜູ້ທີ່ກ່ຽວຂ້ອງໃນ ກິດຈະກຳທາງອາຍາ ຫຼື ກຳລັງໃນຂະບວນການການດຳເນີນຄະດີທາງກົດໝາຍການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ- ຊຶ່ງພະນັກງານຕ້ອງລາຍງານ ແລະ ເປີດເຜີຍຕໍ່ອົງການແຄຣ໌ອົດສະຕາລີ ຫຼື ຄູ່ຮ່ວມງານຂອງອົງການແຄຣ໌<br>- ແລະໃນເວລາທີ່ພະນັກງານສະໝັກຕຳແໜ່ງທີ່ປະກາດພາຍໃນ.<br><br>○ ທ່ານຜູ້ອຳນວຍການພະແນກຍຸດທະສາດ ແລະ ການບໍລິການ ຂອງອົງການແຄຣ໌ອົດສະຕາລີ ຕ້ອງໄດ້ຮັບການລາຍງານເປັນລາຍລັກອັກສອນໃນທັນທີ ຖ້າຫາກວ່າພະນັກງານແຄຣ໌ ຫຼື ພະນັກງານ ຂອງຄູ່ຮ່ວມງານຖືກກ່າວຫາວ່າມີການກະທຳຜິດ ຫຼື ຖືກຈັບ ຫຼື ຖືກຕັດສິນລົງໂທດ , ການກະທຳຜິດທາງອາຍາກ່ຽວກັບການລ່ວງລະເມີດເດັກ) ຫຼືການຫາຜົນປະໂຫຍດ. (ລວມທັງສື່ຮູບພາບລາມົກກ່ຽວກັບເດັກນ້ອຍ). |
| ການຜູກຈິດສຳນຶກ | ອົງການແຄຣ໌ຈະຮັບປະກັນບຸກຄະລາກອນທັງໝົດ (ລວມທັງຄູ່ຮ່ວມງານ) ຮັບຮູ້ນະໂຍບາຍການປົກປ້ອງ, ພຶດຕິກຳການປະພຶດ ແລະ ກົດລະບຽບທີ່ຄາດຫວັງໄວ້ ແລະ ວິທີການລາຍງານການກະທຳຜິດຂອງແຄຣ໌ສາກົນ.<br>• ອົງການແຄຣ໌ຈະສົ່ງເສີມ ແລະຮຽກຮ້ອງໃຫ້ມີ ວຽກງານການປົກປ້ອງກັບຄູ່ຮ່ວມງານ ຊຶ່ງລວມມີ:<br>○ ການດຳເນີນການປະເມີນກ່ຽວກັບການປົກປ້ອງ ຊຶ່ງເປັນສ່ວນໜຶ່ງ ຂອງຂະບວນການທາງກົດໝາຍ.<br>○ ມີການຕິດຕາມກວດກາເປັນປົກກະຕິ;<br>○ ເອົານະໂຍບາຍການປົກປ້ອງເປັນສ່ວນນຶ່ງຂອງທຸກໆຂໍ້ຕົກລົງ ຫລື ບົດບັນທຶກຄວາມເຂົ້າໃຈ.<br>○ ເປັນຂໍ້ບັງຄັບໃນທຸກໆ ເອກກະສານສັນຍາ ຊຶ່ງ | ພາກທີ 3.1 ອະທິບາຍຄວາມຮັບຜິດຊອບຮ່ວມກັນລະຫວ່າງອົງການແຄຣ໌ (ແຄຣ໌ອົດສະຕາລີ ແລະ ແຄຣ໌ປະຈຳປະເທດ ທີ່ກຳນົດໄວ້ໃນໃນຂອບເຂດຂອງນະໂຍບາຍ) ແລະ ຄູ່ຮ່ວມງານເພື່ອ:<br>● ຮັບປະກັນວ່າ ພະນັກງານຂອງເຂົາເຈົ້າເຂົ້າໃຈພັນທະຂອງເຂົາເຈົ້າໃນການປ້ອງກັນເດັກນ້ອຍໃນເວລາທີ່ປະຕິບັດວຽກງານຂອງຕົນ (ເບິ່ງພາກ 4.2:ຕ້ອງໄດ້ມີການຝຶກອົບຮົມໃຫ້ແຄຣ໌ທັງຫມົດ ແລະ ບຸກຄະລາກອນຂອງຄູ່ຮ່ວມງານໃນຂອບເຂດຂອງການປະຖົມນິເທດ ແລະ ໃນທຸກໆ 2 ປີ).<br>● ມີລະບົບການໃຫ້ຄຳເຫັນ ຫລື ຄຳຕິນິຕິຊົມທີ່ຊັດເຈນລະດັບຊຸມຊົນ ທີ່ເຫມາະສົມກັບສະພາບທ້ອງຖິ່ນ ແລະ |

| | | |
|---|---|---|
| | ບຸກຄະລາກອນທຸກຄົນ ຕ້ອງປະຕິບັດຕາມນະໂຍບາຍ ແລະ ກົດລະບຽບທີ່ສອດຄ່ອງກັບນະໂຍບາຍນີ້.<br>○ ການຢຸດຕິຂໍ້ຕົກລົງຖ້າຫາກວ່າ ຄູ່ຮ່ວມງານ ຫຼື ບຸກຄະລາກອນຂອງເຂົາເຈົ້າ ບໍ່ໄດ້ປະຕິບັດຕາມມາດຕະການປ້ອງກັນ, ການສືບສວນ ແລະ ການລາຍງານຂໍ້ກ່າວຫາ ຫຼື ດຳເນີນການແກ້ໄຂເມື່ອມີເຫດການທີ່ເກີດຂຶ້ນຢ່າງທັນການ.<br>○ ເຮັດວຽກຮ່ວມກັນສ້າງຄວາມອາດສາມາດໃນວຽກງານການປົກປ້ອງ. | ເປັນລະບົບທີ່ສາມາດເຂົ້າເຖິງທຸກຄົນຂອງຜູ້ເຂົ້າຮ່ວມໂຄງການ (ໂດຍສະເພາະເດັກນ້ອຍ).<br>● ມີກົນໄກການລາຍງານທີ່ຊັດເຈນ ຫຼື ຂັ້ນຕອນ ການລາຍງານຂອງພະນັກງານແຄຣ໌ ແລະ ຄູ່ຮ່ວມງານ ເພື່ອລາຍງານຄວາມກັງວົນກ່ຽວກັບການຫາຜົນປະໂຫຍດ ຫຼື ການລ່ວງລະເມີດເດັກນ້ອຍ; ແລະ ເພື່ອລາຍງານທັນທີ ຜູ້ຕ້ອງສົງໄສຫຼື ກໍລະນີທີ່ຖືກກ່າວຫາວ່າມີການຫາຜົນປະໂຫຍດ ຫຼື ການລ່ວງລະເມີດເດັກນ້ອຍ.<br><br>ອົງການແຄຣ໌ອົດສະຕາລີ ແລະ ອົງການແຄຣ໌ປະຈຳປະເທດ ໃນຂອບເຂດຂອງນະໂຍບາຍຈະ:<br>● ປະເມີນການປະຕິບັດຕົວຈິງໃນວຽກງານການປ້ອງກັນເດັກ ແລະການປົກປ້ອງ ຂອງຄູ່ຮ່ວມງານເປັນປະຈຳ.<br>● ສະໜັບສະໜູນຊ່ວຍເຫລືອຄູ່ຮ່ວມງານເພື່ອສ້າງຄວາມເຂັ້ມແຂງຂອງເຂົາເຈົ້າໃນການປະຕິບັດຕົວຈິງຂອງວຽກງານປົກປ້ອງ.<br><br>ໃນລະບົບການເຮັດສັນຍາກັບຄູ່ຮ່ວມງານຕ້ອງປະກອບມີດັ່ງລຸ່ມນີ້:<br>● ລວມເອົາຂໍ້ກຳນົດສຳລັບຄູ່ຮ່ວມງານ ທີ່ອາດຈະຮອງຮັບນະໂຍບາຍນີ້ ຫລື ນະໂຍບາຍຂອງຄູ່ຮ່ວມງານຂອງແຄຣ໌ມາເປັນນະໂຍບາຍຂອງຕົນ ຫຼື ນຳໃຊ້ນະໂຍບາຍການປ້ອງກັນເດັກຂອງຄູ່ຮ່ວມງານ ຖ້ານະໂຍບາຍດັ່ງກ່າວມີມາດຕະຖານ ແລະ ຂໍ້ບັງຄັບດຽວກັນກັບຂອງແຄຣ໌.<br>● ລວມເອົາຂໍ້ກຳນົດທີ່ຄູ່ຮ່ວມງານ ແລະ ພະນັກງານຂອງເຂົາເຈົ້າ ປະຕິບັດຕາມນະໂຍບາຍນີ້ (ຫຼືນະໂຍບາຍຂອງຄູ່ຮ່ວມງານຖ້າຫາກວ່ານຳໃຊ້ໄດ້)<br>ລວມທັງກົດລະບຽບການປະພຶດ ສຳລັບການປົກປ້ອງເດັກ.<br>● ໄດ້ລະບຸຢ່າງຈະແຈ້ງວ່າ ຖ້າຄູ່ຮ່ວມງານ ແລະ ບຸກຄະລາກອນຂອງເຂົາເຈົ້າ ບໍ່ປະຕິບັດຕາມນະໂຍບາຍນີ້ (ຫຼື ນະໂຍບາຍຂອງຄູ່ຮ່ວມງານເອງ ທີ່ສາມາດນຳໃຊ້ໄດ້), ລວມທັງການບໍ່ມີການລາຍງານໃນທັນທີ ຂອງ ກໍລະນີທີ່ສົງໃສ ຫຼື ຂໍ້ກ່າວຫາໃນການລ່ວງລະເມີດ ຫຼື ການຫາຜົນປະໂຫຍດເດັກນ້ອຍ ຫຼື ການບໍ່ປະຕິບັດຕາມນະໂຍບາຍ, |

Supporting women.
Defeating poverty.

# ການປຽບທຽບລະຫວ່າງ ນະໂຍບາຍການປົກປ້ອງ ແລະ ການປ້ອງກັນເດັກນ້ອຍຂອງອົງການແຄຣ໌ສາກົນ ແລະ ອົງການແຄຣ໌ອົດສະຕາລີ

| | | |
|---|---|---|
| | | ຈະເປັນພື້ນຖານສໍາລັບອົງການແຄຣ໌ອົດສະຕາລີໃນການຢຸດຕິຂໍ້ຕົກລົງ ຊຶ່ງຈະມີຜົນໃນທັນທີ. |
| ການຝຶກອົບຮົມຂອງຄູ່ຮ່ວມງານ | • ເຮັດວຽກຮ່ວມກັບຄູ່ຮ່ວມງານເພື່ອສ້າງຂີດຄວາມສາມາດ ຂອງອົງການຈັດຕັ້ງພວກເຮົາ ເພື່ອບັນລຸຄໍາໝັ້ນສັນຍາຂອງພວກເຮົາໃນວຽກງານການປົກປ້ອງ.<br><br>• ຖ້າເປັນໄປໄດ້ ແລະ ຈໍາເປັນ ໃນການສະໜັບສະໜູນຊ່ວຍເຫລືອຄູ່ຮ່ວມງານໃຫ້ມີທັກສະ ແລະ ຄວາມສາມາດປະຕິບັດຕາມໜ້າທີ່ຄວາມຮັບຜິດຊອບ ທີ່ສອດຄ່ອງກັບນະໂຍບາຍ. | ພາກທີ 4.2 ລະບຸໄວ້ວ່າ:<br>• ທຸກຄົນຂອງແຄຣ໌ ແລະ ຄູ່ຮ່ວມງານຈະໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງນະໂຍບາຍການປົກປ້ອງເດັກນ້ອຍຂອງແຄຣ໌ອົດສະຕາລີ ແລະ ລະບຽບການຂອງການປະຕິບັດເພື່ອປົກປ້ອງເດັກ.<br>• ຄົນຂອງແຄຣ໌ທີ່ເຂົ້າໃຫມ່ທັງຫມົດແລະຄູ່ຮ່ວມງານໃໝ່ຈະໄດ້ຮັບການຝຶກອົບຮົມກ່ຽວກັບການປົກປ້ອງເດັກ ແລະ ກົນໄກການລາຍງານ ໃນຊ່ວງປະຖົມນິເທດ ແລະ ຈັດຊໍ້າເປັນປົກກະຕິ (ທຸກໆ 2 ປີ). |
| ການກວດກາຄຸ້ມຄອງ | ແຄຣ໌ຈະຕິດຕາມ ແລະ ທົບທວນຄືນການປະຕິບັດຕົວຈິງວຽກງານການປົກປ້ອງ ແລະ ຂໍຄໍາຄິດຄໍາເຫັນຈາກພະນັກງານ, ຄູ່ຮ່ວມງານ, ຜູ້ເຂົ້າຮ່ວມໂຄງການ ແລະ ຊຸມຊົນບ່ອນທີ່ແຄຣ໌ເຮັດວຽກ. | ໂດຍສະເພາະ, ອົງການແຄຣ໌ຈະດໍາເນີນການປະເມີນຜົນເປັນປະຈໍາ, ຢ່າງໜ້ອຍທຸກໆ ສາມປີ ຫຼື ເລື້ອຍກວ່ານັ້ນ, ຕາມການກໍານົດໂດຍການປະເມີນຄວາມສ່ຽງ, ການປະຕິບັດຕົວຈິງໃນວຽກງານການປ້ອງກັນເດັກ ແລະ ວຽກງານການປົກປ້ອງ ແຄຣ໌ປະຈໍາປະເທດ ເຂດຂອງນະໂຍບາຍ ແລະ ຄູ່ຮ່ວມງານທີ່ຢູ່ໃນຂອບເຂດ, ເພື່ອຮັບປະກັນນະໂຍບາຍ ແລະ ລະບຽບການຕ່າງໆ ໄດ້ມີການປະຕິບັດຢ່າງສະໝໍ່າສະເໝີ ແລະ ມີປະສິດທິຜົນ. (ຂໍ້ 3.1) |
| ການຮ່ວມມື | ແຄຣ໌ຈະຮ່ວມມືກັບພາຍໃນຂະແໜງວຽກງານການປົກປ້ອງ ລວມທັງຊຸມຊົນ, ອົງການຈັດຕັ້ງອື່ນໆ, ຜູ້ໃຫ້ທຶນ, ລັດຖະບານ ແລະ ອື່ນໆເພື່ອຍົກລະດັບກ້າວໜ້າໃນການປະຕິບັດຕົວຈິງຂອງພວກເຮົາ. | ຕາມນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ. |
| ການປະເມີນຄວາມສ່ຽງ | • ແຄຣ໌ຈະດໍາເນີນການປະເມີນຄວາມສ່ຽງການປົກປ້ອງ ແລະ ບັນທຶກຂັ້ນຕອນ ໃນການລົບລ້າງ ຫຼື ຫຼຸດຜ່ອນຄວາມສ່ຽງເຫຼົ່ານັ້ນ.<br>• ປະສົມປະສານມາດຕະການການປົກປ້ອງເຂົ້າໃນໂຄງການ ແລະ ເຂົ້າໃນທຸກຮອບວຽນໂຄງການ (ຮ່ວມມືກັນອອກແບບວິທີການ ກັບຄູ່ຮ່ວມງານ ແລະ ຜູ້ເຂົ້າຮ່ວມ). | ພາກທີ 4.3 ລາຍລະອຽດຂອງອົງປະກອບຂອງຂະບວນການ ການປະເມີນຄວາມສ່ຽງ ແລະ ໄດ້ລະບຸໄວ້ວ່າ:<br>• ການປະເມີນຄວາມສ່ຽງ ແມ່ນຕ້ອງປະກອບເຂົ້າໃນຂະບວນການອອກແບບ, ການວາງແຜນ,ການຈັດຕັ້ງປະຕິບັດ ແລະການຕິດຕາມຂອງກິດຈະກໍາຂອງໂຄງການ.<br>• ການປະເມີນຄວາມສ່ຽງກ່ຽວກັບການປົກປ້ອງຊຶ່ງຕ້ອງປະຕິບັດຢູ່ບ່ອນທີ່ອາດມີການຕິດຕໍ່ພົວພັນກັບເດັກນ້ອຍ. ຊຶ່ງຫມາຍຄວາມວ່າທັງສອງເປັນການປະເມີນຄວາມສ່ຽງຂອງຄູ່ຮ່ວມງານ (ໂດຍຜ່ານຂະບວນການການປະເມີນທາງກົດໝາຍ) ແລະ ໂຄງການ. |

| | | |
|---|---|---|
| | | • ຕ້ອງມີການຕິດຕາມບັນທຶກ ແລະ ລາຍງານເພື່ອ ຄວບຄຸມ ແລະ ປະເມີນກ່ຽວກັບປະສິດທິພາບ.<br>• ທົບທວນ ແລະ ປັບປຸງ ບັນຫາຄວາມສ່ຽງຕ່າງໆ ຕໍ່ປີ ຫຼື ເລື້ອຍໆກ່ວານັ້ນ ໃນກໍລະນີ ມີການປ່ຽນແປງທີ່ສຳຄັນ ໃນສະພາບແວດລ້ອມຂອງການດຳເນີນງານ. |
| ການນຳໃຊ້ ຮູບພາບ ,ຮູບແຕ້ມ, ວິດີໂອ ແລະ ຂໍ້ມູນ ຂອງເດັກນ້ອຍ | (ຢູ່ໃນກົດລະບຽບການ ເອກະສານຊ້ອນທ້າຍ 1 ແຕ່ບໍ່ມີຢູ່ໃນນະໂຍບາຍຫຼັກ) | • ຮູບພາບ, ຮູບແຕ້ມ, ວິດີໂອ ຫຼື ອື່ນໆຂອງເດັກນ້ອຍ ແລະ ນັບທັງຂໍ້ມູນສ່ວນບຸກຄົນທີ່ກ່ຽວຂ້ອງກັບເດັກນ້ອຍ ເຖິງແມ່ນວ່າຈະມີການຕົກລົງກັນໃນການດູແລ ແລະ ປົກປ້ອງເຂົາເຈົ້າແລ້ວ ຫຼື ອາດຮັບປະກັນວ່າບໍ່ເປັນການ ຫາຜົນປະໂຫຍດ ແຕ່ຈະບໍ່ສາມາດໂຄສະນາໂດຍຜ່ານຮູບແບບໃດໆຂອງສື່ມວນຊົນ, ລວມທັງສື່ສັງຄົມ ແລະ ທຸກໆຮູບແບບການສົ່ງຂໍ້ຄວາມອື່ນໆ.<br>● ສຳລັບຄົນແຄຣ໌ ແລະ ຄູ່ຮ່ວມງານ ໃນການຖ່າຍຮູບ ຫຼື ສ້າງຮູບເງົາເດັກນ້ອຍ ແລະ ນຳໃຊ້ຮູບພາບຂອງເດັກນ້ອຍ ເພື່ອຈຸດປະສົງສຳລັບວຽກງານຈຳເປັນຕ້ອງປະຕິບັດດັ່ງລຸ່ມນີ້:<br>○ ໄດ້ຮັບການຍິນຍອມເຫັນດີ (ຊຶ່ງໄດ້ອະທິບາຍຄວາມສ່ຽງ, ຮູບພາບ ຫຼື ຮູບເງົາຈະນຳໃຊ້ແນວໃດ ຊຶ່ງເນັ້ນວ່າການຍິນຍອມນັ້ນສາມາດຖືກຖອນຄືນໄດ້)<br>○ ເອົາໃຈໃສ່ຮັບປະກັນປະເພນີ ຫຼື ກົດລະບຽບຕ່າງໆຂອງທ້ອງຖິ່ນແມ່ນໄດ້ມີການນັບຖື ປະຕິບັດໃນການຜະລິດຮູບພາບ ຕ່າງໆ.<br>○ ຮັບປະກັນວ່າເດັກນ້ອຍແມ່ນເປັນຕົວແທນຢ່າງສົມກຽດ ແລະ ດ້ວຍຄວາມນັບຖື.<br>○ ຮັກສາຄວາມເປັນສິດສ່ວນຕົວ. |
| ກົນໄກການລາຍງານ | • ຕ້ອງມີຫຼາຍຮູບແບບຂອງກົນໄກການລາຍງານ ກ່ຽວກັບ ການລວນລາມທາງເພດ, ການລ່ວງລະເມີດ ແລະ ການຫາຜົນປະໂຫຍດທາງເພດ ແລະ ການລ່ວງລະເມີດເດັກ, ແລະ ລະບົບດັ່ງກ່າວຕ້ອງສາມາດເຂົ້າເຖິງ, ມີຄວາມລະອຽດອ່ອນກັບຄວາມຕ້ອງການຕ່າງໆ ຂອງທຸກຄົນ.<br>• ພວກເຮົາຈະເອົາຝ່າຍແຜນງານ ຜູ້ເຂົ້າຮ່ວມໃນ ຂະບວນການອອກແບບ, ການຕິດຕາມ ແລະ ປະເມີນຜົນຂອງກົນໄກລະບົບການລາຍງານ<br>● ລະບົບການລາຍງານຈະມີເປັນພາສາທ້ອງຖິ່ນທີ່ ກ່ຽວຂ້ອງ.<br>● ພວກເຮົາຈະສ້າງຄວາມຮັບຮູ້ເຂົ້າໃຈໃຫ້ຊຸມຊົນ | ຄວາມຮັບຜິດຊອບຮ່ວມກັນລະຫວ່າງແຄຣ໌ ແລະ ຄູ່ຮ່ວມງານເພື່ອຮັບປະກັນ (ຂໍ້ 3.1 ແລະ 4.8):<br>• ມີກົນໄກການຕຳນິສິ່ງຂ່າວລະດັບຊຸມຊົນທີ່ຈະແຈ້ງ ເໝາະສົມກັບສະພາບການທ້ອງຖິ່ນ ແລະ ທຸກໆຄົນຜູ້ເຂົ້າຮ່ວມໂຄງການສາມາດເຂົ້າເຖິງໄດ້ (ໂດຍສະເພາະແມ່ນ ເດັກນ້ອຍ).<br>• ມີກົນໄກການລາຍງານ ຫຼື ຂັ້ນຕອນການ ລາຍງານທີ່ຈະແຈ້ງ ໃຫ້ພະນັກງານເພື່ອລາຍງານຄວາມ ເປັນຫ່ວງກ່ຽວກັບການຫາຜົນປະໂຫຍດ ຫຼື ການລ່ວງ ລະເມີດເດັກ (ຂັ້ນຕອນການລາຍງານສະເພາະຂອງ ປະເທດນັ້ນໆ ທີ່ຄຳນຶງເຖິງສະພາບການທ້ອງຖິ່ນ)<br>• ບຸກຄົນໃດກໍ່ຕາມທີ່ຮູ້ເຖິງການກະທຳຜິດ, ເຖິງວ່າຈະ |

| | | |
|---|---|---|
| | ກ່ຽວກັບຄວາມຄາດຫວັງຂອງອົງການຕໍ່ພຶດຕິກຳຂອງພະນັກງານຂອງພວກເຮົາ ແລະ ບຸກຄະລາກອນທີ່ກ່ຽວຂ້ອງ (ລວມທັງພະນັກງານຂອງຄູ່ຮ່ວມງານ)<br>● ຜູ້ທີ່ຮັບລາຍງານຈະໄດ້ຮັບການຝຶກອົບຮົມເພື່ອຮັບມື ແກ້ໄຂກັບບັນຫາ. | ເປັນພຽງຄວາມເຊື່ອ, ການສົງໃສ ຫຼື ການເປີດເຜີຍຂອງເດັກເອງ ໃນການລ່ວງລະເມີດ ຫຼື ການຫາຜົນປະໂຫຍດເດັກ (ຈະແມ່ນອະດີດ ຫຼື ປະຈຸບັນ), ຊຶ່ງກະທຳໂດຍຄົນຂອງແຄຣ໌, ຄູ່ຮ່ວມງານ ຫຼື ແຂກມາຢ້ຽມຢາມ ແມ່ນ ຕ້ອງລາຍງານໃຫ້ແຄຣ໌ທັນທີ. ການລາຍງານແມ່ນຜ່ານ ຄວາມຮັບຜິດຊອບວຽກງານການປົກປ້ອງ, ຫົວໜ້າພະແນກບຸກຄະລາກອນ, ຫົວໜ້າອົງການປະຈຳປະເທດ ຫຼື ຜູ້ອຳນວຍພະແນກຍຸດທະສາດ ແລະ ໃຫ້ຄວາມສະດວກໃນການໃຫ້ບໍລິການປະຈຳອົງການແຄຣ໌ ອົດສະຕາລີ ຫຼື ຜ່ານລະບົບສາຍດ່ວນ CARELine. |
| ຊ່ວຍເຫລືອຜູ່ຖືກຜົນກະທົບ/ຜູ້ຖືກເຄາະຮ້າຍ | • ແຄຣ໌ຈະໃຫ້ການສະໜັບສະໜູນ ແລະ ການຊ່ວຍເຫຼືອຜູ້ທີ່ຮ້ອງຮຽນ ແລະ ຜູ້ທີ່ມີປະສົບການຈາກການລວນລາມທາງເພດ, ການຫາຜົນປະໂຫຍດ ແລະ ການລ່ວງລະເມີດທາງເພດ ຫຼື ລ່ວງລະເມີດເດັກໂດຍພະນັກງານແຄຣ໌ ແລະ ບຸກຄະລາກອນທີ່ກ່ຽວຂ້ອງ (ລວມເຖີງຄູ່ຮ່ວມງານ). | ໂດຍສະເພາະ:<br>● ແຄຣ໌ຈະສົ່ງຜູ້ເຄາະຮ້າຍ-ຜູ້ລອດຊີວິດໃຫ້ອົງການຊ່ວຍເຫລືອ ແລະ ການດູແລສຸກເສີນ /ຜູ້ໃຫ້ຄຳປຶກສາ ແລະ ຮັບຜິດຊອບຄ່າໃຊ້ຈ່າຍສຳລັບການຊ່ວຍເຫລືອຂັ້ນພື້ນຖານທີ່ເຫມາະສົມ. ຄົນຂອງແຄຣ໌ຈະເຮັດວຽກຮ່ວມກັບອົງການຈັດຕັ້ງຂອງລັດເພື່ອຊ່ວຍເຫລືອ ແລະ ສະຫນັບສະຫນູນເດັກນ້ອຍເພື່ອໃຫ້ມີຄວາມປອດໄພ. |
| ການແກ້ແຄ້ນ | ທຸກຄົນຈະໄດ້ຮັບການປົກປ້ອງຈາກການແກ້ແຄ້ນຊຶ່ງການກ່າວຫາ ທີ່ລາຍງານນັ້ນບໍ່ມີຄວາມຈິງ. | ໂດຍສະເພາະ:<br>● ພວກເຮົາຈະບໍ່ຍອມຮັບຕໍ່ທຸກຮູບແບບຂອງການບີບບັງຄັບ,ການຂົ່ມຂູ່, ການແກ້ແຄ້ນ ຫຼື  ການຕອບໂຕ້ຕໍ່ບຸກຄົນຜູ້ທີ່ລາຍງານບໍ່ວ່າ ຈະກ່ຽວກັບການລ່ວງລະເມີດໃນທຸກຮູບແບບ ຫຼື ການຫາຜົນປະໂຫຍດ, ໃນການສະຫນອງຂໍ້ມູນ ຫຼື ການຊ່ວຍເຫຼືອອື່ນໆໃນຂະບວນການການສືບສວນ ທີ່ໄດ້ລະບຸໄວ້ໃນນະໂຍບາຍການລາຍງານຂອງອົງການແຄຣ໌ ອົດສະຕາລີ. |
| ການຕິດຕາມການລາຍງານ | • ແຄຣ໌ ຈະຮັບປະກັນວ່າການກ່າວຫາທັງຫມົດແມ່ນໄດ້ກວດສອບ, ການປະເມີນຄວາມສ່ຽງ ແລະ ຢ່າງລະອຽດ ສິ່ງໃດທີ່ຕ້ອງມີການສືບສວນ ຫຼື ລາຍງານໃຫ້ເຈົ້າໜ້າທີ່ ທີ່ຕ້ອງມີການບັງຄັບໃຊ້ທາງກົດໝາຍ.<br>● ການສືບສວນດຳເນີນໃຫ້ທັນເວລາ, ຄວາມປອດໄພ ແລະ ເປັນມືອາຊີບ ໂດຍຜູ້ທີ່ຜ່ານການຝຶກອົບຮົມມາ ແລະ ມີປະສົບການຢ່າງເຫມາະສົມ.<br>● ການສືບສວນຕ້ອງມີການເອົາໃຈໃສ່ໃນເລື້ອງບົດບາດຍິງ-ຊາຍ ແລະ ວິທີການທີ່ສຸມໃສ່ຜູ້ຖືກຜົນກະທົບເປັນໃຈກາງ. | ໂດຍສະເພາະ:<br>• ບົດລາຍງານທັງໝົດຕ້ອງຖືກສົ່ງໃຫ້ ຜູ້ອຳນວຍການພະແນກຍຸດທະສາດ ແລະການໃຫ້ຄວາມສະດວກໃນບໍລິການຂອງແຄຣ໌ອົດສະຕາລີ ຫຼື ສົ່ງຫາຜູ້ອຳນວຍການປະຈຳປະເທດ ປະເທດທີ່ກ່ຽວຂ້ອງ ຜູ້ທີຈະ:<br>○ ກຳນົດການຕິດຕາມທີ່ເຫມາະສົມ.<br>○ ຮັບປະກັນວ່າ ຂໍ້ກຳນົດທີ່ຈຳເປັນຂອງການລາຍງານແມ່ນປະຕິບັດຕາມຂໍ້ບັງຄັບ; ແຈ້ງໃຫ້ອຳນາດການປົກຄອງທີ່ກ່ຽວຂ້ອງ.<br>○ ແຈ້ງໃຫ້ຜູ້ອຳນວຍການໃຫຍ່ ແລະຄະນະກຳມະການໄດ້ຮັບຊາບ. |

| | | |
|---|---|---|
| | ອົງການແຄຣ໌ຈະໃຊ້ເວລາຢ່າງທັນການ ແລະ ການປະຕິບັດການທີ່ເໝາະສົມຕໍ່ຜູ້ທີ່ລະເມີດກົດລະບຽບນະໂຍບາຍ. | • ອົງການແຄ໌ມີຄວາມຮັບຜິດຊອບເພື່ອຮັບປະກັນວ່າທຸກພາກສ່ວນທີ່ມີສ່ວນຮ່ວມ ໄດ້ຮັບການປະຕິບັດຢ່າງຍຸດຕິທຳ, ແລະ ສິດທິຂອງແຕ່ລະຄົນແມ່ນໄດ້ຮັບການເຄົາລົບ, ລວມທັງການຮັກສາຄວາມລັບ.<br>• ບຸກຄົນທີ່ຖືກສົງໃສ/ຜູ້ກະທຳຜິດຈະຖືກໂຈະສັນຍາໃນຂະນະທີ່ມີການດຳເນີນການສືບສວນ. ພວກເຂົາຕ້ອງໄດ້ຮັບການຮັບຮູ້ການກ່າວຫາທີ່ມີຕໍ່ເຂົາເຈົ້າໃນລາຍລະອຽດພຽງພໍ ແລະຕ້ອງໄດ້ຮັບການອະນຸຍາດໃຫ້ໂອກາດທີ່ສົມເຫດສົມຜົນເພື່ອໄດ້ອະທິບາຍເຖິງແຕ່ລະຂໍ້ກ່າວຫາ.<br>• ຜູ້ໃຫ້ທຶນຄວນໄດ້ຮັບການແຈ້ງໃຫ້ຊາບໂດຍບໍ່ຄຳນຶງເຖິງຜົນຂອງການສືບສວນ.<br>• ໃນຕອນທ້າຍຂອງການຕອບໂຕ້ ຕໍ່ການເປີດເຜີຍ ຫຼື ຂໍ້ກ່າວຫາ, ບຸກຄົນທີ່ໄດ້ລາຍງານ, ແລະຜູ້ຖືກເຄາະຮ້າຍ ຖ້າບໍ່ແມ່ນຄົນດຽວກັນ, ຄວນໃຫ້ໂອກາດທີ່ຈະໃຫ້ຄຳຄິດຄຳເຫັນກ່ຽວກັບຂະບວນການລາຍງານ.<br>• ຖ້າຜູ້ທີ່ລາຍງານເຊື່ອວ່າການແກ້ໄຂບໍ່ໄດ້ຖືກປະຕິບັດພຽງພໍ ຊຸກຍູ້ໃຫ້ຜູ້ກ່ຽວໃຫ້ມີການຕິດຕາມ. |

ຕາຕະລາງຂ້າງລຸ່ມນີ້ປຽບທຽບກົດລະບຽບຫຼັກຈັນຍາບັນ ທີ່ຄັດຕິດຢູ່ໃນເອກະສານຊ້ອນທ້າຍ 1 ຂອງນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ ແລະ ເອກະສານຊ້ອນທ້າຍ 2 ຂອງນະໂຍບາຍການປົກປ້ອງເດັກຂອງອົງການແຄຣ໌ອົດສະຕາລີ. ໝາຍເຫດ: ທຸກລາຍການ ແມ່ນປະຕິບັດກັບທຸກພາກສ່ວນທີ່ລະບຸໃນຂອບເຂດຂອງນະໂຍບາຍທີ່ກ່ຽວຂ້ອງ.

| ລາຍການ | ນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ | ນະໂຍບາຍການປົກປ້ອງເດັກຂອງອົງການແຄຣ໌ອົດສະຕາລີ |
|---|---|---|
| ວັດທະນະທຳ | 1.ສ້າງ ແລະ ຮັກສາຄວາມປອດໄພ ແລະ ວັດທະນະທຳການຂອງອົງການທີ່ເປັນທຳ ທີ່ປ້ອງກັນ ແລະ ຕ້ານການລວນລາມທາງເພດ, ການຫາຜົນປະໂຫຍດ ແລະ ການລ່ວງລະເມີດທາງເພດ ແລະການລ່ວງລະເມີດເດັກ.<br>2. ປະຕິບັດຕໍ່ທຸກຄົນດ້ວຍກຽດສັກສີ ແລະ | ນອກເໜືອຈາກກົດລະບຽບການປົກປ້ອງ ຂອງອົງການແຄຣ໌ສາກົນ:<br>1.2 ພະຍາຍາມດູແລຢູ່ສະເໝີ ແລະປົກປ້ອງສິດຂອງເດັກນ້ອຍແລະໃຫ້ຜົນປະໂຫຍດສູງສຸດຂອງເຂົາເຈົ້າ ໃນການພິຈາລະນາຂັ້ນຕົ້ນ.<br>2. ຮັກສາຄວາມສົມບູນຂອງອົງການແຄຣ໌, ໂດຍສ້າງຄວາມໝັ້ນໃຈວ່າການປະພຶດສ່ວນຕົວ ແລະ ຄວາມເປັນມືອາຊີບຂອງຂ້ອຍແມ່ນ, ແລະເຫັນວ່າຢູ່ມາດຕະຖານທີ່ສູງທີ່ສຸດ. |

| | | |
|---|---|---|
| | ເຄົາລົບນັບຖື ແລະ ທ້າທາຍທັດສະນະຄະຕິ ແລະ ພຶດຕິກຳທີ່ຂັດກັບນະໂຍບາຍປົກປ້ອງຂອງແຄຣ໌ສາກົນ ແລະ ກົດລະບຽບການປົກປ້ອງ. | |
| ການລາຍງານ | 3.ລາຍງານຄວາມກັງວົນໃດໆໃນທັນທີ ກ່ຽວກັບການລ່ວງລະເມີດທີ່ເປັນໄປໄດ້ຂອງນະໂຍບາຍການປົກປ້ອງຂອງອົງການແຄຣ໌ສາກົນ ຫຼື ກົດລະບຽບຫຼັກຈັນຍາບັນການປົກປ້ອງ, ບໍ່ວ່າຈະກະທຳໂດຍພະນັກງານແຄຣ໌ ຫຼື ໂດຍບຸກຄະລາກອນທີ່ກ່ຽວຂ້ອງ (ເຊັ່ນ ລວມທັງຄູ່ຮ່ວມງານ ແລະ ແຂກມາຢ້ຽມຢາມ).<br>4. ແບ່ງປັນຂໍ້ມູນທີ່ລະອຽດອ່ອນຂ້ອຍອາດຈະຕ້ອງຕະໜັກເຖິງບັນຫາທີ່ກ່ຽວຂ້ອງກັບຄວາມກັງວົນຂອງການລວນລາມທາງເພດ, ການຫາຜົນປະໂຫຍດ ແລະການລ່ວງລະເມີດທາງເພດ ຫຼື ການລ່ວງລະເມີດເດັກ, ບໍ່ວ່າຈະກ່ຽວຂ້ອງກັບພະນັກງານ, ຜູ້ເຂົ້າຮ່ວມໂຄງການ ຫຼື ຜູ້ອື່ນໆໃນຊຸມຊົນທີ່ແຄຣ໌ເຮັດວຽກ, ໂດຍຜ່ານທາງເລືອກຂອງການລາຍງານທີ່ມີຢູ່. ຂ້ອຍຈະຮັກສາຄວາມລັບດັ່ງກ່າວ. | 4.3. ນອກເຫນືອໄປຈາກການລາຍງານຄວາມກັງວົນ, ພວກເຮົາຄາດຫວັງວ່າບຸກຄົນຍັງລາຍງານຄວາມສົງໃສ ແລະ ຂໍ້ກ່າວຫາກ່ຽວກັບການຫາຜົນປະໂຫຍດຕໍ່ເດັກ ແລະ ການລ່ວງລະເມີດເດັກໂດຍບຸກຄົນຂອງແຄຣ໌, ຄູ່ຮ່ວມງານ ຫຼື ແຂກມາຢ້ຽມຢາມ.<br>7. ລາຍງານທຸກຄວາມກັງວົນ, ການສົງໃສ ຫຼື ຂໍ້ກ່າວຫາ (ອີງຕາມກົດລະບຽບການປົກປ້ອງອົງການແຄຣ໌ສາກົນ) |
| ການເປີດເຜີຍ | 5. ເປີດເຜີຍຕໍ່ແຄຣ໌ກ່ຽວກັບການຕັດສິນໃນຄະດີແພ່ງ ຫຼື ການຕັດສິນໂທດທາງອາຍາທີ່ກ່ຽວຂ້ອງກັບຂໍ້ກ່າວຫາຕໍ່ຂ້າພະເຈົ້າກ່ຽວກັບການການລວນລາມທາງເພດ, ການຫາຜົນປະໂຫຍດ ຫຼື ການລ່ວງລະເມີດທາງເພດຕໍ່ຜູ້ໃດນຶ່ງ. | ນອກເຫນືອໄປຈາກກົດລະບຽບຫຼັກຈັນຍາບັນການປົກປ້ອງຂອງອົງການແຄຣ໌ສາກົນ:<br>6.1 ທຸກຄົນຈະເປີດເຜີຍທຸກຂໍ້ກ່າວຫາ, ການຕັດສິນລົງໂທດ ແລະ ຜົນຂອງການກະທຳຜິດອື່ນໆ, ທີ່ເກີດຂຶ້ນກ່ອນ ຫຼື ເກີດຂຶ້ນໃນລະຫວ່າງການຮ່ວມງານກັບອົງການແຄຣ໌, ທີ່ກ່ຽວຂ້ອງກັບການຫາຜົນປະໂຫຍດ ແລະ ການລ່ວງລະເມີດເດັກ, ລວມທັງພາຍໃຕ້ກົດໝາຍພື້ນເມືອງ.<br>6.2 ທຸກຄົນທີ່ຢູ່ໃນຂອບເຂດຕ້ອງລາຍງານການມີສ່ວນຮ່ວມໃນກິດຈະກຳທາງອາຍາ ແລະ ໃນຂະບວນການປະຕິບັດລະບຽບທາງວິໄນ. |

| | | |
|---|---|---|
| ການພົວພັນກັບເດັກນ້ອຍ | 6. ຕ້ອງໃຫ້ແນ່ໃຈສະເຫມີວ່າ ຂ້າພະເຈົ້າມີມີຜູ້ໃຫຍ່ຜູ້ອື່ນໆຢູ່ນຳໃນເວລາເຮັດວຽກກັບເດັກນ້ອຍ.<br>ທຸກຄົນຢູ່ໃນຂອບເຂດຂອງນະໂຍບາຍຈະບໍ່:<br>● ບໍ່ລວນລາມທາງເພດ, ຫາຜົນປະໂຫຍດ ຫຼື ລ່ວງລະເມີດໃຜຜູ້ນຶ່ງ<br>● ບໍ່ມີສ່ວນຮ່ວມໃນທຸກຮູບແບບກິດຈະກຳທາງເພດ ຫຼື ພັດທະນາສາຍສຳພັນທາງດ້ານຮ່າງກາຍ / ທາງເພດກັບເດັກນ້ອຍ (ຜູ້ອາຍຸຕ່ຳກວ່າ 18 ປີ)ໂດຍບໍ່ຄຳນຶງເຖິງອາຍຸຂອງການຍິນຍອມໃນທ້ອງຖິ່ນ.<br>● ບໍ່ແລກປ່ຽນເງິນ, ການຈ້າງງານ, ສິນຄ້າ, ຫຼື ການບໍລິການທາງເພດ, ລວມທັງຄວາມໂປດປານທາງເພດ ຫຼື ອື່ນໆຮູບແບບຂອງການເຮັດໃຫ້ອັບອາຍ, ເຮັດໃຫ້ເສື່ອມເສຍ ຫຼື ພຶດຕິກຳການຂູດຮີດ.<br>● ບໍ່ມີສ່ວນຮ່ວມໃນກິດຈະກຳທາງເພດໃດໆ ຫຼື ຄວາມສຳພັນທາງເພດກັບຜູ້ເຂົ້າຮ່ວມໂຄງການ/ ຜູ້ໄດ້ຮັບຜົນປະໂຫຍດ. ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າຕ້ອງລາຍງານໃຫ້ຫົວໜ້າສາຍງານ ຫຼື ຫົວໜ້າພະແນກບຸກຄະລາກອນ.<br>● ບໍ່ຮຽກຮ້ອງການບໍລິການ ຫຼື ຄວາມນິຍົມທາງເພດຈາກຜູ້ເຂົ້າຮ່ວມຂອງ ໂຄງການຂອງແຄຣ໌, ເດັກນ້ອຍ ຫຼື ຜູ້ອື່ນໆໃນຊຸມຊົນທີ່ແຄຣ໌ເຮັດວຽກ, ແລະຈະບໍ່ມີສ່ວນຮ່ວມໃນການສ້າງສາຍສຳພັນໃນການລວນລາມ, ຫາຜົນປະໂຫຍດ ຫຼື ລ່ວງລະເມີດ.<br>● ບໍ່ສະໜັບສະໜູນ ຫຼື ມີສ່ວນຮ່ວມໃນທຸກຮູບແບບຂອງກິດຈະກຳການຫາຜົນປະໂຫຍດທາງເພດ ຫຼື ການລ່ວງລະເມີດທາງເພດ. ກິດຈະກຳ, ໃນນັ້ນ, ຍົກຕົວຢ່າງ,ຮູບພາບລາມົກເດັກ, ການຄ້າມະນຸດ ຫຼື ການແຕ່ງງານຂອງເດັກນ້ອຍ. | ນອກເຫນືອໄປຈາກລາຍການທີ່ໄດ້ກ່າວມາໃນກົດລະບຽບຫຼັກຈັນຍາບັນຂອງອົງການແຄຣ໌ສາກົນ, ຂໍ້ 4 ຍັງກຳນົດພາກສ່ວນຕ່າງໆໃນຂອບເຂດຂອງນະໂຍບາຍເພື່ອ:<br>● ບໍ່ສວຍໃຊ້ອຳນາດໜ້າທີ່ຕຳແໜ່ງຂອງຕົນເພື່ອມີອິດທິພົນ ແລະ ແຊກແຊງການດຳລົງຊີວິດ ແລະ ສະຫວັດດີພາບຂອງເດັກ.<br>● ບໍ່ຮຽກຮ້ອງການບໍລິການ ຫຼື ຄວາມນິຍົມຈາກເດັກເພື່ອເປັນການຕອບແທນສຳລັບການປົກປ້ອງ ຫຼື ການຊ່ວຍເຫຼືອ.<br>● ບໍ່ເອົາເດັກນ້ອຍຜູ້ທີ່ບໍ່ມີການເບິ່ງແຍງຈາກຜູ່ໃຫຍ່ມາເຮືອນສ່ວນຕົວຂອງຕົນ, ເວັ້ນເສຍແຕ່ວ່າເດັກນ້ອຍຜູ້ນັ້ນຢູ່ໃນຄວາມສ່ຽງ ຕໍ່ການທີ່ຈະຖືກບາດເຈັບ ຫຼື ອັນຕະລາຍທາງດ້ານຮ່າງກາຍ ຢ່າງກະທັນຫັນ.<br>● ບໍ່ນອນຢູ່ໃກ້ກັບເດັກນ້ອຍທີ່ບໍ່ມີການເບິ່ງແຍງຈາກຜູ້ໃຫຍ່ ເວັ້ນເສຍແຕ່ວ່າມີຄວາມຈຳເປັນຢ່າງແທ້ຈິງ, ໃນທຸກກໍລະນີຕ້ອງໄດ້ຮັບການອະນຸຍາດຈາກຫົວໜ້າສາຍງານຂອງຕົນ, ແລະຮັບປະກັນວ່າມີຜູ້ໃຫຍ່ຄົນອື່ນຖ້າເປັນໄປໄດ້ (ໝາຍເຫດ: ກົດລະບຽບນີ້ຈະບໍ່ນຳໃຊ້ກັບລູກຂອງຕົນເອງ).<br>● ບໍ່ຢູ່ພາຍໃຕ້ອິດທິພົນຂອງເຫຼົ້າ ຫຼື ຢາເສບຕິດໃນຂະນະທີ່ພົວພັນກັບເດັກທີ່ບໍ່ມີການເບິ່ງແຍງຈາກຜູ້ໃຫຍ່ (ໝາຍເຫດ: ກົດລະບຽບນີ້ຈະບໍ່ນຳໃຊ້ກັບລູກຂອງຕົນເອງ).<br>● ບໍ່ໃຊ້ສື່ສັງຄົມທີ່ບໍ່ເໝາະສົມເພື່ອຕິດຕໍ່, ເຂົ້າເຖິງ, ຊັກຊວນ ຫຼື ເປັນໝູ່ກັບເດັກນ້ອຍທີ່ມີສ່ວນຮ່ວມໃນໂຄງການ ຫຼື ກິດຈະກຳທີ່ໄດ້ຮັບທຶນ ຫຼື ຄຸ້ມຄອງໂດຍອົງການແຄຣ໌ ແລະ ໃຊ້ຮູບພາບຂອງເດັກນ້ອຍເຫຼົ່ານັ້ນໃນທາງທີ່ຜິດໃນເວັບໄຊສື່ສັງຄົມສ່ວນຕົວ (ຍົກຕົວຢ່າງ: ເຜີຍແຜ່ທາງອອນລາຍ).<br>● ເມື່ອໃດກໍ່ຕາມທີ່ເປັນໄປໄດ້, ຮັບປະກັນວ່າເມື່ອເຮັດວຽກກັບເດັກນ້ອຍຈະມີຜູ້ໃຫຍ່ຄົນອື່ນຢູ່ນຳ.<br>ລາຍການ 5 ມີເນື້ອໃນທີ່ຄ້າຍຄືກັນກັບ ກົດລະບຽບການປົກປ້ອງຂອງອົງການແຄຣ໌ສາກົນ, ແຕ່ໂດຍສະເພາະເຈາະຈົງວ່າທຸກຄົນໃນຂອບເຂດຂອງນະໂຍບາຍຕ້ອງບໍ່ສະຫນັບສະຫນູນ ຫຼື ມີສ່ວນຮ່ວມໃນການໃຊ້ແຮງງານເດັກ. |

| | | |
|---|---|---|
| | ● ບໍ່ຈ້າງເດັກນ້ອຍສໍາລັບແຮງງານພາຍໃນຄອບຄົວ ຫຼື ແຮງງານອື່ນໆ ທີ່ບໍ່ເຫມາະສົມເນື່ອງຈາກອາຍຸຂອງເຂົາເຈົ້າ ຫຼື ຊ່ວງພັດທະນາການຂອງເດັກ, ເຊິ່ງຂັດຂວາງຕໍ່ການສຶກສາ ແລະ ກິດຈະກໍາການພັດທະນາການ ຫຼື ເຮັດໃຫ້ພວກເຂົາມີຄວາມສ່ຽງສູງຕໍ່ການບາດເຈັບ.<br>● ບໍ່ໃຊ້ພາສາ ຫຼື ມີພຶດຕິກໍາທີ່ບໍ່ເຫມາະສົມຕໍ່ເດັກໂດຍການລວນລາມ, ການຂົ່ມເຫັງ, ການຍຸຍົງທາງເພດ, ການດູໝິ່ນ ຫຼື ໃຊ້ວັດທະນະທໍາທີ່ບໍ່ເຫມາະສົມ. | |
| ຊັບພະຍາກອນ | 7. ຮັບປະກັນສະເຫມີວ່າເພື່ອຈຸດປະສົງກ່ຽວຂ້ອງກັບວຽກງານໃນເວລາທີ່ຂ້າພະເຈົ້າຖ່າຍຮູບ ຫຼື ເຮັດຮູບເງົາເດັກນ້ອຍ, ຂ້າພະເຈົ້າຈະ:<br>● ປະຕິບັດຕາມປະເພນີທ້ອງຖິ່ນ ຫຼື ກົດລະບຽບ ສໍາລັບການຜະລິດຮູບພາບສ່ວນບຸກຄົນ.<br>● ໄດ້ຮັບການຍິນຍອມເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກນ້ອຍ, ກ່ອນທີ່ຈະຖ່າຍຮູບ ຫຼື ສ້າງຮູບເງົາເດັກນ້ອຍ, ອະທິບາຍວິທີການຈຸດປະສົງຂອງການນໍາໃຊ້ຮູບຖ່າຍເຫລົ່ານັ້ນ ຫຼື ຮູບເງົາແນວໃດ.<br>●ຮັບປະກັນວ່າ ຮູບຖ່າຍ, ຮູບເງົາ, ມີວິດີໂອ ແລະ ວິດີໂອຂອງເດັກນ້ອຍມີການນໍາສະເໜີຢ່າງມີກຽດສັກສີ ແລະ ລັກສະນະທີ່ມີຄວາມນັບຖື ແລະ ບໍ່ແມ່ນຢູ່ໃນສະຖານະພາບທີ່ມີຄວາມສ່ຽງ ຫຼື ອ່ອນແອ.<br>● ຮັບປະກັນໃຫ້ເດັກນ້ອຍໄດ້ຮັບການນຸ່ງຫົ່ມຢ່າງພຽງພໍ ແລະ ບໍ່ຢູ່ໃນທ່າທີ່ທີ່ອາດເບິ່ງວ່າເປັນການລ່ວງລະເມີດທາງເພດ.<br>● ໃຫ້ແນ່ໃຈວ່າເອກະສານ, ຄໍາອະທິບາຍຂໍ້ຄວາມຕ່າງໆ ບໍ່ເປີດເຜີຍຂໍ້ມູນທີ່ຂອງ | ລາຍການທີ 3 ມີເນື້ອທີ່ຄ້າຍຄືກັນກັບກົດລະບຽບການປົກປ້ອງຂອງອົງການແຄຣ໌ສາກົນ ແຕ່ລະບຸໄວ້ວ່າພາກສ່ວນທີ່ກໍານົດຢູ່ໃນຂອບເຂດຂອງນະໂຍບາຍຕ້ອງ:<br>3.3 ຮັກສາຄວາມລັບກ່ຽວກັບຂໍ້ມູນສ່ວນຕົວທີ່ກ່ຽວຂ້ອງກັບເດັກນ້ອຍ |

| | | |
|---|---|---|
| | ເດັກນ້ອຍ ເຊັ່ນຕົວຢ່າງ ຊື່ ແລະ ສະຖານທີ່ຢູ່ຂອງເດັກ | |
| | 8. ປົກປ້ອງ, ຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນມະນຸດ, ດ້ານການເງິນ ແລະ ວັດຖຸອຸປະກອນຢ່າງເຫມາະສົມ ແລະ ຈະບໍ່ໃຊ້ຊັບພະຍາກອນຂອງອົງການແຄຣ໌ ເພື່ອຫາຜົນປະໂຫຍດ, ຕົວະຍົວະ ຫຼື ລວນລາມຜູ້ເຂົ້າຮ່ວມໂຄງການຂອງແຄຣ໌, ເດັກນ້ອຍ ຫຼື ຜູ້ອື່ນໆໃນຊຸມຊົນທີ່ແຄຣ໌ເຮັດວຽກ. | |

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**
ຕູ້ປ.ນ 4326, ຖະໜົນໜອງລ້າງທໍ່, ບ້ານ ໜອງລ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : (856-21) 217 727
ອີເມວ: Lao.info@careint.org
ເວັບໄຊ: https://www.careint.org.la/
ເຟສບຸກ/ຢູທູບ: CARE internationnal in Lao PDR